# ທັກສະການໂຄສະນາເຜີຍແຜ່ກົດໝາຍ ຢູ່ ສປປ ລາວ
# Law advertising skills in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 12
## ການໂຄສະນາເຜີຍແຜ່ກົດໝາຍຜ່ານວັດທະນະທຳ ແລະ ສິລະປະ
## Advertising through the merit tradition and arts

**1. ຄວາມໝາຍ ແລະ ຄວາມສຳຄັນ**

- **ຄວາມໝາຍ**

ການໂຄສະນາເຜີຍແຜ່ກົດໝາຍຜ່ານວັດທະນະທຳ ແລະ ສິລະປະ ແມ່ນການນຳເອົາເນື້ອໃນຂອງກົດໝາຍ ແລະ ລະບຽບການ ເຂົ້າສູ່ຊີວິດສັງຄົມ ໂດຍຜ່ານວັດທະນະທຳ ແລະ ສິລະປະ ເປັນຕົ້ນການສະແດງລະຄອນ, ບົດກາບກອນ, ຂັບລຳ, ບົດເພງ ແລະ ຮູບພາບ[1].

ການໂຄສະນາເຜີຍແຜ່ກົດໝາຍຜ່ານວັດທະນະທຳ ແລະ ສິລະປະຕ້ອງປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການຍຸຕິທຳ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ.

- **ຄວາມສຳຄັນ**

ພັກເຮົາຖືວ່າ ວັດທະນະທຳ ແມ່ນພື້ນຖານແຫ່ງການຍືນຍົງຄົງຕົວຂອງຊາດ ເພາະວັດທະນະທຳພາໃຫ້ ຄົນທັງຊາດມີຄວາມເປັນອັນໜຶ່ງອັນດຽວກັນ, ສາມັກຄີເປັນປຶກແຜ່ນ ເພື່ອປົກປັກຮັກສາ ແລະ ສ້າງສາພັດທະ ນາປະເທດຊາດ. ຫາກຊາດໃດບໍ່ສາມາດຮັກສາ ຂະນົບທຳນຽມ, ປະເພນີ ແລະ ວັດທະນະທຳຂອງຊາດຕົນ, ຊາດນັ້ນກໍຈະເຊື່ອມສູນໄປ, ຖືກຊາດອື່ນກືນກິນ. ສະນັ້ນ, ການຮັກສາ ວັດທະນະທຳແຫ່ງຊາດກໍແມ່ນການຮັກ ຊາດ.

ການໂຄສະນາເຜີຍແຜ່ກົດໝາຍສາມາດດຳເນີນໄປດ້ວຍຫຼາຍຮູບ ຫຼາຍສີ, ຫຼາຍວິທີການ ແລະ ສາມາດສອດຫ້ອຍເຂົ້າໃນທຸກຂົງເຂດວຽກງານ. ດັ່ງນັ້ນ, ການໂຄສະນາເຜີຍແຜ່ນິຕິກຳໂດຍຜ່ານວັດທະນະທຳ ແລະ ສິລະປະແມ່ນຮູບການໜຶ່ງທີ່ສຳຄັນທີ່ຖືກນຳໃຊ້ໃນແຕ່ລະໄລຍະທີ່ເໝາະສົມ ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງວຽກງານ.

**2. ຈຸດປະສົງ**

[1] ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ ປີ 2020, ໝວດທີ 2, ມາດຕາ 19.

ເພື່ອໃຫ້ຄົນທັງຊາດເຊື່ອມຊຶມ, ເຂົ້າໃຈງ່າຍ, ເຂົ້າໃຈຢ່າງເລິກເຊິ່ງ ແລະ ຕື່ນຕົວປະຕິບັດແນວທາງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດໃຫ້ປາກົດຜົນເປັນຈິງ ໂດຍຜ່ານບົດກາບກອນ, ບົດກະວີ, ບົດເລື່ອງສັ້ນ, ບົດລະຄອນ, ຮູບເງົາ, ສາລະຄະດີ, ບົດຂັບ, ບົດລຳ, ບົດເພງ ແລະ ອື່ນໆ.

ເພື່ອຫັນຈາກຈິນຕະນາການກົດໝາຍ ປ່ຽນມາເປັນຈິນຕະນາການສິລະປະກຳ, ຈາກວິທີການສະແດງອອກເປັນຖ້ອຍຄຳທີ່ມີໂລຊິກຂອງການໃຊ້ສຳນວນຄຳເວົ້າກົດໝາຍ ມາເປັນການສະແດງອອກທີ່ມີລັກສະນະນາມ ມະທຳ, ໄຝ່ຝັນຂອງສິລະປະກຳ ແນ່ນອນວ່າ ຄວາມຮຽກຮ້ອງຕ້ອງການໃນການຖ່າຍທອດທີ່ຊັດເຈນຈະຖືກ ຫຼຸດລົງຢ່າງງ່າຍດາຍ.

ບັນຫາດັ່ງກ່າວມັນຮຽກຮ້ອງໃຫ້ຜູ້ທີ່ເຮັດວຽກງານໂຄສະນາເຜີຍແຜ່ກົດໝາຍ ແລະ ບັນດາ ນັກສິນລະປິນທີ່ຖ່າຍທອດເນື້ອໃນກົດໝາຍ ຈະຕ້ອງໄດ້ເອົາໃຈໃສ່ຢູ່ເລື້ອຍໆ ພະຍາຍາມບັນລຸໃຫ້ໄດ້ຈຸດປະສົງ ຂອງການໂຄສະນາເຜີຍແຜ່ກົດໝາຍຕ່າງໆ.

**3. ເຕັກນິກຕົ້ນຕໍໃນການເຜີຍແຜ່ກົດໝາຍໂດຍຜ່ານວັດທະນະທຳ, ສິລະປະປະເພດຕ່າງໆ.**

ຜູ້ທີ່ປະດິດແຕ່ງບົດນິພົນຕ່າງໆ ທາງວັດທະນະທຳ,ນຳໃຊ້ສິລະປະກຳຖ່າຍທອດເນື້ອໃນກົດໝາຍຈະຕ້ອງແມ່ນຜູ້ທີ່ເຂົ້າໃຈວັດທະນະທຳ, ສິລະປະກຳປະເພດນັ້ນຢ່າງເລິກເຊິ່ງ, ພ້ອມດຽວກັນນັ້ນກໍຕ້ອງແມ່ນຜູ້ທີ່ກຳແໜ້ນເນື້ອໃນກົດໝາຍທີ່ໄດ້ຖ່າຍທອດໄປນັ້ນ, ໃນຂົງເຂດນີ້ຕ້ອງມີບາງເຕັກນິກພື້ນຖານດັ່ງຕໍ່ໄປນີ້:

- ຮູ້ແຊກຊຶມກົດໝາຍເຂົ້າໃນຊີວິດສັງຄົມ,ກຳໄດ້ສະພາບການປະຕິບັດກົດໝາຍຢູ່ໃນສັງຄົມໃນແຕ່ລະໄລຍະ;

- ກຳໄດ້ບົດບາດຂອງກົດໝາຍໃນການກຳນົດທິດທາງພັດທະນາສັງຄົມ, ລັກສະນະດີເລີດຂອງກົດໝາຍສັງຄົມນິຍົມ, ພ້ອມກັນນັ້ນກໍກຳໃຫ້ໄດ້ບັນດາບັນຫາທີ່ຊີວິດສັງຄົມກຳລັງຕັ້ງ ແລະ ຈະຕັ້ງໃຫ້ແກ່ກົດໝາຍ;

- ຮູ້ປັບປ່ຽນຈິນຕະນາການກົດໝາຍເປັນຈິນຕະນາການສິລະປະກຳ,ຮູ້ປຸກລະດົມຄວາມສຳນຶກຂອງຕົນຕໍ່ເຫດການກ່ຽວກັບຊີວິດກົດໝາຍ ແລະ ສັງຄົມເພື່ອປະດິດຄິດແຕ່ງບົດນິພົນວັດທະນະທຳ, ສິລະປະກຳຕ່າງໆທີ່ມີເນື້ອໃນການໂຄສະນາເຜີຍແຜ່ກົດໝາຍ;

- ມີຄວາມສາມາດແຊກຊຶມເນື້ອໃນກົດໝາຍເຂົ້າໃນບັນຍາກາດງານບຸນຕ່າງໆ, ຊອກໃຫ້ໄດ້ຄວາມສະທົບສະເທືອນໃຈຈາກບັນຍາກາດຂອງງານບຸນ;

- ມີຄວາມສາມາດສັງລວມເນື້ອໃນກົດໝາຍ ແລະ ບັນຫາຕ່າງໆໃນລະດັບສູງ.

**4. ການເຜີຍແຜ່ກົດໝາຍໂດຍຜ່ານບັນດາປະເພດວັດທະນະທຳທີ່ເປັນມູນເຊື້ອ**

ສິລະປະ, ວັດທະນະທຳຫຼາຍປະເພດໄດ້ກົນເລິກເຂົ້າໄປໃນຊີວິດຈິດໃຈຂອງປະຊາຊົນຢູ່ແຕ່ລະເຂດ, ແຄວ້ນ, ແຕ່ລະຊົນເຜົ່າກາຍເປັນວັດທະນະທຳທີ່ມີສີສັນສະເພາະ, ເປັນຄວາມເຄີຍຊິນໃນການຮ່ວມຊີວິດວັດທະນະທຳທີ່ເປັນມູນເຊື້ອຂອງເຂົາເຈົ້າ, ວັດທະນະທຳປະເພດຕ່າງໆເຫຼົ່ານັ້ນຄືກັນກັບຊີ້ນ, ປາ, ເລືອດທີ່ຂາດບໍ່ໄດ້ຢູ່ໃນຊີວິດຈິດໃຈ

ຂອງເຂົາເຈົ້າຊຶ່ງມີກຳລັງດຶງດູດ, ກຳລັງແຊກຊຶມທີ່ແຂງແຮງທີ່ສຸດແລະເລິກເຊິ່ງທີ່ສຸດ. ແຮງດຶງດູດຂອງການເຄື່ອນໄຫວວັດທະນະທຳທີ່ເປັນມູນເຊື້ອແມ່ນເນື່ອງມາຈາກມັນມີຂະນົບທຳນຽມສະເພາະ, ມີບັນຍາກາດສະເພາະ, ມີເອກະລັກທາງວັດທະນະທຳ, ສິລະປະກຳສະເພາະແລະພິເສດແມ່ນມັນໄດ້ກາຍເປັນຮີດຄອງຂອງປະຊາຊົນຢູ່ທີ່ນັ້ນ. ຖ້າແຊກຊ້ອນໄດ້ເນື້ອໃນຂອງກົດໝາຍເຂົ້າໃນການເຄື່ອນໄຫວວັດທະນະທຳຕ່າງໆທີ່ເປັນມູນເຊື້ອແນ່ນອນວ່າປະສິດທິຜົນຂອງການໂຄສະນາເຜີຍແຜ່ກົດໝາຍ ຈະສູງທີ່ສຸດ[2].

ຢູ່ປະເທດເຮົາການເຄື່ອນໄຫວວັດທະນະທຳທີ່ເປັນມູນເຊື້ອມີຫຼາຍປະເພດແລະອຸດົມສົມບູນທີ່ສຸດ. ປະຊາຊົນເຜົ່າຕ່າງໆຈະແມ່ນຢູ່ເຂດພູດອນ, ຫ່າງໄກສອກຫຼີກ ຫຼື ຢູ່ທົ່ງພຽງກໍລ້ວນແຕ່ມີບົດເພງ, ບົດຟ້ອນ, ບົດລຳ,ກາບກອນ ... ສະເພາະຂອງຕົນ, ມີການເຄື່ອນໄຫວວັດທະນະທຳທີ່ເປັນມູນເຊື້ອສະເພາະຂອງແຕ່ລະຊົນເຜົ່າ, ສະນັ້ນພະນັກງານໂຄສະນາເຜີຍແຜ່ກົດໝາຍແຕ່ລະຄົນສາມາດໝູນໃຊ້, ແຊກຊ້ອນເນື້ອໃນກົດໝາຍເຂົ້າໄດ້.

ການໂຄສະນາເຜີຍແຜ່ກົດໝາຍ ໂດຍຜ່ານການເຄື່ອນໄຫວວັດທະນະທຳທີ່ເປັນມູນເຊື້ອມີທ່າແຮງອັນໃຫຍ່ຫຼວງຢູ່ບ່ອນ:

- ວິທີການຖ່າຍທອດມີປະສິດທິພາບ;

- ຂອບເຂດການເຄື່ອນໄຫວແມ່ນກວ້າງຂວາງຢູ່ທຸກເຂດແຄ້ວນທົ່ວປະເທດ;

- ສະຖານທີ່ເຄື່ອນໄຫວແມ່ນມີຫຼາຍທີ່ສຸດເຊັ່ນ ມີວັດ, ສາລາ, ໂບດ, ຕະຫຼາດແມ້ກະທັ້ງເດີ່ນຫຍ້າ;

- ເຈົ້າການໂຄສະນາເຜີຍແຜ່ກົດໝາຍ ແມ່ນອຸດົມສົມບູນເຊັ່ນ ນັກສິນລະປິນ, ນາຍບ້ານ, ຜູ້ຊົງຄຸນວຸດທິ, ເຈົ້າກົກເຈົ້າເລົ່າ;

- ເປົ້າໝາຍຂອງການໂຄສະນາເຜີຍແຜ່ກົດໝາຍ ແມ່ນກວ້າງຂວາງທີ່ສຸດ, ໃນງານບຸນຕ່າງໆລ້ວນແຕ່ດຶງດູດພໍ່ແມ່ປະຊາຊົນທີ່ຢູ່ເຂດນັ້ນ ແລະ ຢູ່ເຂດໃກ້ຄຽງຈູບຈ້າວຫ້າວຫັນເຂົ້າຮ່ວມ;

- ງົບປະມານໃຫ້ແກ່ການໂຄສະນາເຜີຍແຜ່ກົດໝາຍເກືອບວ່າບໍ່ພໍເທົ່າໃດເພາະວ່າມີແຕ່ແຊກຊຶມເຂົ້າໃນເນື້ອໃນຂອງງານບຸນ,ສູງສຸດກໍມີແຕ່ໃຊ້ຈ່າຍຄ່າກະກຽມເວທີໃນກໍລະນີທີ່ຕ້ອງການໃຫ້ມີເວທີສະແດງສະເພາະໃນງານບຸນ;

- ງານບຸນຕ່າງໆຖ້າໄດ້ລົງທຶນລະອຽດອ່ອນ, ແຊກຊຶມເນື້ອໃນກົດໝາຍ, ຈັດຕັ້ງບັນທຶກພາບ, ບັນທຶກສຽງສາມາດຖ່າຍທອດທາງໂທລະພາບ, ວິທະຍຸ, ໂທລະໂຄ່ງທັງຮັບໃຊ້ຄວາມຮຽກຮ້ອງຕ້ອງການວັດທະນະທຳທາງດ້ານຈິດໃຈ, ທັງຮັບໃຊ້ວຽກງານໂຄສະນາເຜີຍແຜ່ກົດໝາຍ ນັ້ນປະສິດທິຜົນຂອງຮູບການນີ້ຍິ່ງຈະໄດ້ຮັບການທະວີຄູນຂຶ້ນ.

**5. ຂັ້ນຕອນຂອງຂະບວນການໂຄສະນາເຜີຍແຜ່ ກົດໝາຍ ໂດຍຜ່ານວັດທະນະທຳ, ສິລະປະທີ່ເປັນມູນເຊື້ອ**

---

[2]ປອ ຈອມຄຳ ບຸບຜາລີວັນ, ປຶ້ມຄູ່ມື ວຽກງານໂຄສະນາເຜີຍແຜ່ກົດໝາຍ, ໜ້າ 62.

ການໂຄສະນາເຜີຍແຜ່ກົດໝາຍ ໂດຍຜ່ານວັດທະນະທຳ, ສິລະປະປະເພດຕ່າງໆ ໂດຍສະເພາະແມ່ນການເຄື່ອນໄຫວວັດທະນະທຳທີ່ເປັນມູນເຊື້ອຕ້ອງໄດ້ດຳເນີນຢ່າງເປັນປົກກະຕິ, ມີລະບອບລະບຽບການຢ່າງລະອຽດ. ຢູ່ຂັ້ນສູນກາງເຖິງວ່າຍັງບໍ່ມີນິຕິກຳຮ່ວມ ລະຫວ່າງ ສອງກະຊວງການຍຸຕິທຳ ແລະ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວກໍຕາມ, ຢູ່ທ້ອງຖິ່ນຕາມພາລະບົດບາດຂອງຕົນສອງຂະແໜງການກໍຄວນມີແຜນການປະສານສົມທົບອັນເປັນພື້ນຖານ ແລະ ຍາວນານເພື່ອເຜີຍແຜ່ ກົດໝາຍ ໃນຮູບການນີ້.

ຕາມແຜນການດັ່ງກ່າວໃນແຕ່ລະໄລຍະ, ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຫຼືວຽກງານຄຸ້ມຄອງ, ຕາມລະດູການຂອງງານບຸນຕ່າງໆນັ້ນອົງການຍຸຕິທຳຫຼືພະນັກງານທີ່ເຮັດວຽກງານໂຄສະນາເຜີຍແຜ່ກົດໝາຍ ຈະຕ້ອງເປັນເຈົ້າການສ້າງແຜນການປະສານສົມທົບກັບຂະແໜງການຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວນຳເອົາແຕ່ລະເນື້ອໃນລະອຽດເຂົ້າໃນງານບຸນນັ້ນໆ.

ແຜນການດັ່ງກ່າວຈະໃຫຍ່ ຫຼື ນ້ອຍແມ່ນຂຶ້ນກັບຂະໜາດຂອງງານບຸນຊຶ່ງຈະແຊກຊ້ອນເນື້ອໃນກົດໝາຍ ແລະ ການຄາດຄະເນຂອງພະນັກງານໂຄສະນາເຜີຍແຜ່ກົດໝາຍ.

ໃນແຜນການຈະຕ້ອງປະກອບມີ:

- ເນື້ອໃນຂອງກົດໝາຍທີ່ຈະເອົາເຂົ້າໃນງານບຸນ;
- ປະເພດວັດທະນະທຳທີ່ຈະຖ່າຍທອດເນື້ອໃນກົດໝາຍ;
- ການປະດິດຄິດແຕ່ງບົດປະພັນຕ່າງໆ;
- ຜູ້ທີ່ຖືກຄັດເລືອກເພື່ອປະຕິບັດບົດປະພັນ;
- ການຈັດຕັ້ງຜັນຂະຫຍາຍແຜນການ;
- ການແບ່ງຄວາມຮັບຜິດຊອບລະຫວ່າງຂະແໜງການຍຸຕິທຳ ແລະ ຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ.

ແຜນການສ້າງບົດປະພັນວັດທະນະທຳຕ່າງໆ ທີ່ມີເນື້ອໃນກົດໝາຍອາດຈະມີຄວາມແຕກຕ່າງບາງຢ່າງນອກຈາກການເລືອກຫົວເລື່ອງ, ເລືອກປະເພດວັດທະນະທຳທີ່ຈະຖ່າຍທອດເນື້ອໃນກົດໝາຍ, ຄິດໄລ່ລາຍຈ່າຍ,ການແບ່ງຄວາມຮັບຜິດຊອບແລ້ວຍັງມີພາກສ່ວນຕ່າງໆຕື່ມອີກເຊັ່ນ:

- ການຝຶກອົບຮົມກົດໝາຍ, ເຈາະຈົ້ມຫົວເລື່ອງປະດິດແຕ່ງໃຫ້ເພື່ອນຮ່ວມງານ. ບາງຄັ້ງຈະຕ້ອງໄດ້ຈັດຕັ້ງໃຫ້ເພື່ອນຮ່ວມງານໄປທັດສະນະຕົວຈິງ, ເກັບກຳສະພາບຕົວຈິງເພື່ອຈະເລືອກຫົວເລື່ອງໃຫ້ຖືກຕ້ອງ, ສອດຄ່ອງ, ເພື່ອນຮ່ວມງານທີ່ຖືກເຊີນສ່ວນຫຼາຍແມ່ນນັກແຕ່ງ, ນັກສິນລະປິນ, ຜູ້ທີ່ມີຊື່ສຽງໂດ່ງດັງ, ເຂົ້າໃຈດີປະເພດວັດທະນະທຳທີ່ຈະໃຊ້ຖ່າຍທອດເນື້ອໃນກົດໝາຍ;
- ສ້າງຕັ້ງຄະນະກຳມະການແລະຈັດຕັ້ງການກວດ, ເລືອກບົດປະພັນ. ໂຄງປະກອບຂອງຄະນະກາມະການຕົ້ນຕໍແມ່ນຂະແໜງການຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ, ແຕ່ກໍ່ຈຳເປັນຕ້ອງມີຜູ້ຕາງໜ້າຈາກຂະແໜງການຍຸຕິທຳ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງ;

- ຈັດຕັ້ງການພິມຈຳໜ່າຍບົດປະພັນ.

ການໂຄສະນາເຜີຍແຜ່ກົດໝາຍ ໂດຍຜ່ານວັດທະນະທຳ, ສິລະປະປະເພດຕ່າງໆ ແມ່ນໜຶ່ງໃນບັນດາຮູບການ ໂຄສະນາເຜີຍແຜ່ກົດໝາຍ ທີ່ມີລັກສະນະດີເດັ່ນສະເພາະ.ມີທ່າແຮງສະເພາະ, ຢ່າງໃດກໍຕາມ, ຈາກຈິນຕະນາການ ກົດໝາຍປ່ຽນມາເປັນຈິນຕະນາການສິລະປະ, ຈາກວິທີການສະແດງອອກເປັນຖ້ອຍຄຳທີ່ມີໂລຊິກຂອງການໃຊ້ ສຳນວນຄຳເວົ້າກົດໝາຍມາເປັນການສະແດງອອກທີ່ມີລັກສະນະນາມມະທຳ, ໄຟຝັນຂອງສິລະປະກາແນ່ນອນວ່າ ຄວາມຮຽກຮ້ອງຕ້ອງການໃນການຖ່າຍທອດທີ່ຊັດເຈນຈະຖືກຫຼຸດລົງຢ່າງງ່າຍດາຍ. ບັນຫາດັ່ງກ່າວມັນຮຽກຮ້ອງ ໃຫ້ຜູ້ທີ່ເຮັດວຽກງານໂຄສະນາເຜີຍແຜ່ກົດໝາຍ ແລະ ບັນດານັກສິນລະປິນທີ່ຖ່າຍທອດເນື້ອໃນກົດໝາຍຈະຕ້ອງ ໄດ້ເອົາໃຈໃສ່ຢູ່ເລື້ອຍໆເພື່ອເວລາໃດກໍບັນລຸໃຫ້ໄດ້ຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍ.

**6. ການສ້າງແຜນການ**

ເພື່ອເຮັດໃຫ້ການໂຄສະນາເຜີຍແຜ່ກົດໝາຍ ໂດຍຜ່ານວັດທະນະທຳ ແລະ ສິລະປະ ບັນລຸໄດ້ຕາມຈຸດປະສົງ ແລະ ຄາດໝາຍທີ່ເຮົາວາງໄວ້, ກ່ອນອື່ນໝົດຕ້ອງມີການສ້າງແຜນການຢ່າງລະອຽດ ໂດຍສະເພາະ ເປົ້າໝາຍ, ຈຸດປະສົງ, ເນື້ອໃນ ແລະ ຄາດໝາຍທີ່ຕ້ອງການ.

ຕາມແຜນການດັ່ງກ່າວໃນແຕ່ລະໄລຍະ, ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ຫຼື ວຽກ ງານ ຄຸ້ມຄອງ, ຕາມລະດູການຂອງງານບຸນຕ່າງໆນັ້ນຂະແໜງການຍຸຕິທຳ ຫຼື ພະນັກງານທີ່ເຮັດວຽກງານໂຄສະ ນາ ເຜີຍແຜ່ກົດໝາຍ ຈະຕ້ອງເປັນເຈົ້າການສ້າງແຜນການປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະ ນະທຳ ແລະ ທ່ອງທ່ຽວ ນຳເອົາແຕ່ລະເນື້ອໃນລະອຽດເຂົ້າໃນງານບຸນນັ້ນໆ.

ແຜນການດັ່ງກ່າວຈະໃຫຍ່ ຫຼື ນ້ອຍ ແມ່ນຂຶ້ນກັບຂະໜາດຂອງງານບຸນ ຊຶ່ງຈະແຊກຊ້ອນເນື້ອໃນກົດໝາຍ ຕ່າງໆ ແລະ ການຄາດຄະເນຂອງພະນັກງານໂຄສະນາເຜີຍແຜ່ກົດໝາຍ.

ໃນແຜນການ ປະກອບມີ:

- ເນື້ອໃນຂອງກົດໝາຍທີ່ຈະເອົາເຂົ້າໃນງານບຸນ;
- ປະເພດວັດທະນະທຳທີ່ຈະຖ່າຍທອດເນື້ອໃນຂອງກົດໝາຍ;
- ການປະດິດຄິດແຕ່ງບົດນິພົນຕ່າງໆ;
- ຜູ້ທີ່ຖືກຄັດເລືອກເພື່ອປະຕິບັດບົດນິພົນ;
- ການຈັດຕັ້ງຜັນຂະຫຍາຍແຜນການ;
- ການແບ່ງຄວາມຮັບຜິດຊອບ ລະຫວ່າງ ຂະແໜງການຍຸຕິທຳ ແລະ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ແຜນການສ້າງບົດນິພົນວັດທະນະທຳຕ່າງໆ ທີ່ມີເນື້ອໃນກົດໝາຍ ອາດຈະມີຄວາມແຕກຕ່າງບາງຢ່າງນອກ ຈາກການເລືອກຫົວເລື່ອງ, ເລືອກປະເພດວັດທະນະທຳທີ່ຈະຖ່າຍທອດເນື້ອໃນກົດໝາຍ, ຄິດໄລ່ລາຍຈ່າຍ, ການແບ່ງ ຄວາມຮັບຜິດຊອບແລ້ວ ຍັງມີພາກສ່ວນຕ່າງໆຕື່ມອີກ ເຊັ່ນ:

- ກຳນົດບັນດາບົດລະຄອນ, ບົດລຳ, ບົດກາບກອນ, ບົດເພງ;

- ລວບລວມ, ຝຶກອົບຮົມກົດໝາຍຕ່າງໆ, ເຈາະຈີ້ມຫົວເລື່ອງປະດິດແຕ່ງໃຫ້ເພື່ອນຮ່ວມງານ. ບາງຄັ້ງຈະ ຕ້ອງໄດ້ຈັດຕັ້ງໃຫ້ເພື່ອນຮ່ວມງານໄປທັດສະນະຕົວຈິງ, ເກັບກຳສະພາບຕົວຈິງເພື່ອຈະເລືອກຫົວເລື່ອງໃຫ້ຖືກ ຕ້ອງ, ສອດຄ່ອງ; ເພື່ອນຮ່ວມງານທີ່ຖືກເຊີນສ່ວນຫຼາຍ ແມ່ນນັກແຕ່ງ, ນັກສິນລະປິນ, ຜູ້ທີ່ມີຊື່ສຽງໂດ່ງດັງ, ເຂົ້າໃຈຄີ ປະເພດວັດທະນະທຳທີ່ຈະໃຊ້ຖ່າຍທອດເນື້ອໃນກົດໝາຍນັ້ນ;

- ແຕ່ງຕັ້ງຄະນະກຳມະການ ແລະ ຈັດຕັ້ງການກວດ, ເລືອກບົດລະຄອນ, ບົດລຳ, ບົດກາບກອນ, ບົດເພງ, ບົດຟ້ອນຕ່າງໆ;

- ໂຄງປະກອບຂອງຄະນະກຳມະການຕົ້ນຕໍ ແມ່ນຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ແຕ່ກໍຈຳເປັນຕ້ອງມີຜູ້ຕາງໜ້າຈາກຂະແໜງການຍຸຕິທຳ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ.

**7. ສິ່ງທີ່ຄວນຫຼີກເວັ້ນ**

- ບໍ່ໃຫ້ນຳເອົາການໂຄສະນາເຜີຍແຜ່ກົດໝາຍ ຜ່ານສິລະປະການສະແດງເປັນການຄ້າພຽງຢ່າງດຽວ, ເປັນເຄື່ອງມືໂຄສະນາບິດເບືອນ, ແບ່ງແຍກຄວາມສາມັກຄີໃນຄອບຄົວ, ຄວາມສາມັກຄີປອງດອງພາຍໃນຊາດ ແລະ ລະຫວ່າງປະເທດ;

- ຈັດຕັ້ງ ແລະ ເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ກົດໝາຍ ຜ່ານສິລະປະການສະແດງ ທັງຢູ່ພາຍໃນ ແລະ ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

- ດັດແປງເນື້ອໃນ, ອັດສຳເນົາ ຮູບແບບບົດປະພັນ, ຜະລິດຕະພັນສິລະປະການສະແດງຂອງບຸກຄົນອື່ນ ໂດຍບໍ່ໄດ້ຮັບການເຫັນດີ ຈາກເຈົ້າຂອງລິຂະສິດ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;

- ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

## References:


1. ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020;
2. ປະມວນເອກະສານຝຶກອົບຮົມທັກສະການໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
3. ປື້ມໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ ສປປ ລາວ, ປີ 2022;
4. ຕຳລາກໍ່ສ້າງວິຊາຊີບຍຸຕິທຳ, ທັກສະການໃຫ້ຄຳປຶກສາທາງດ້ານກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
5. ປອ. ຈອມຄຳບຸບຜາລີວັນ, ປື້ມຄູ່ມື ວຽກງານເຜີຍແຜ່, ສຶກສາອົບຮົມກົດໝາຍ, ປີ 2008.